ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມສ່ວຍສາອາກອນ

ເລກທີ 1128 /ກສອ

ນະຄອນຫຼວງວຽງຈັນ, ວັນທີ 24 APR 2020

# ແຈ້ງການເພີ່ມເຕີມ
# ກ່ຽວກັບການຄິດໄລ່ອາກອນລາຍໄດ້ຈາກເງິນເດືອນ

ເຖິງ : ທ່ານຜູ້ອຳນວຍການ ວິສາຫະກິດ ສ່ວນບຸກຄົນ, ນິຕິບຸກຄົນ ທີ່ເປັນນັກລົງທຶນ ທັງພາຍໃນ ແລະຕ່າງປະເທດ ໃນຂອບເຂດທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດ ພັນທະອາກອນ ຕາມຂໍ້ຕົກລົງ ວ່າດ້ວຍການກຳນົດນະໂຍບາຍ ແລະ ມາດຕະການ ເພື່ອຫລຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນສະບັບປັບປຸງ ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ກ່ຽວກັບການເພີ່ມທະວີມາດຕະການສະກັດກັ້ນ, ກັນກາດລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 31/ນຍ, ລົງວັນທີ 02 ເມສາ 2020 ວ່າດ້ວຍການກຳນົດນະໂຍບາຍ ແລະມາດຕະການ ເພື່ອຫລຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ເສດຖະກິດຂອງລາວ;
- ອີງຕາມ ແຈ້ງການຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1027/ກງ, ລົງວັນທີ 10 ເມສາ 2020;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 2834/ກງ, ລົງວັນທີ 22 ສິງຫາ 2017ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມສ່ວຍສາອາກອນ.

**ກົມສ່ວຍສາອາກອນ ຂໍຖືແຈ້ງມາຍັງທ່ານຊາບວ່າ:** ໃຫ້ປະຕິບັດນະໂຍບາຍຍົກເວັ້ນການເກັບອາກອນລາຍໄດ້ເງິນເດືອນ ຂອງຜູ້ອອກແຮງງານທັງໝົດທັງພາກລັດ ແລະເອກະຊົນ ທີ່ມີລາຍໄດ້ 5 ລ້ານກີບລົງມາ ໃນໄລຍະ 3 ເດືອນ (ເດືອນ ເມສາ, ພຶດສະພາ ແລະ ມິຖຸນາ) ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 31/ນຍ, ລົງວັນທີ 02 ເມສາ 2020, ສຳລັບວິທີຄິດໄລ່ ໃຫ້ປະຕິບັດດັ່ງນີ້:

- **ກໍລະນີມີລາຍຮັບຕໍ່າກວ່າ 5 ລ້ານກີບລົງມາ**

  ໝາຍເຖິງ ຜູ້ມີລາຍໄດ້ຢູ່ໃນ 2 ຂັ້ນ ຕາມຕາຕະລາງ ຄິດໄລ່ອາກອນລາຍໄດ້ຈາກເງິນເດືອນຄື:
  + ແຕ່ 1,300,000 ກີບ ລົງມາ ຕົກຢູ່ໃນອັດຕາ 0% (ຍົກເວັ້ນຕາມກົດໝາຍ)
  + ແຕ່ 1,300,000 ຫາ 5,000,000 ກີບ ຢູ່ໃນອັດຕາ 5% (ຍົກເວັ້ນ ຕາມຂໍ້ຕົກລົງ ເລກທີ 31/ນຍ)
- **ສຳລັບຜູ້ມີລາຍໄດ້ເງິນເດືອນ ເກີນ 5 ລ້ານກີບຂຶ້ນໄປ ໃຫ້ຄິດໄລ່ ຫັກຍົກເວັ້ນ 5 ລ້ານກີບ ກ່ອນ ແລ້ວຈຶ່ງຄິດໄລ່ຕາມຂັ້ນທະວີຄູນ ໂດຍເລີ່ມຈາກອັດຕາ 10% ຂຶ້ນໄປ** ຕາມຕາຕະລາງຄິດໄລ່ອາກອນລາຍໄດ້ຈາກເງິນເດືອນ ທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ດັ່ງນີ້:

(ຫົວໜ່ວຍເປັນເງິນກີບ)

| | ຂັ້ນ | ຖານລາຍໄດ້ແຕ່ລະເດືອນ | ພື້ນຖານຄິດໄລ່ | ອັດຕາ | ອາກອນແຕ່ລະຂັ້ນ | ອາກອນທັງໝົດ |
|---|---|---|---|---|---|---|
| ຍົກເວັ້ນ | 1 | ແຕ່ 1.300.000 ລົງມາ | 1.300.000 | 0% | 0 | 0 |
| | 2 | ເກີນ 1.300.000 ຫາ 5.000.000 | 3.700.000 | 5% | 185.000 | 185.000 |
| ບໍ່ຍົກເວັ້ນ | 3 | ເກີນ 5.000.000 ຫາ 15.000.000 | 10.000.000 | 10% | 1.000.000 | 1.185.000 |
| | 4 | ເກີນ 15.000.000 ຫາ 25.000.000 | 10.000.000 | 15% | 1.500.000 | 2.685.000 |
| | 5 | ເກີນ 25.000.000 ຫາ 65.000.000 | 40.000.000 | 20% | 8.000.000 | 10.685.000 |
| | 6 | ເກີນ 65.000.000 | ............ | 25% | ............ | ............ |

ສຳລັບໄລຍະເວລາ ການແຈ້ງ ແລະຊຳລະອາກອນ ໃຫ້ປະຕິບັດດັ່ງນີ້:

- ອາກອນລາຍໄດ້ເງິນເດືອນ ຂອງເດືອນ ເມສາ 2020 ໃຫ້ແຈ້ງ ແລະຊຳລະອາກອນ ບໍ່ໃຫ້ກາຍວັນທີ 20 ພຶດສະພາ 2020;
- ອາກອນລາຍໄດ້ເງິນເດືອນ ຂອງເດືອນ ພຶດສະພາ 2020 ໃຫ້ແຈ້ງ ແລະຊຳລະອາກອນ ບໍ່ໃຫ້ກາຍວັນທີ 20 ມິຖຸນາ 2020;
- ອາກອນລາຍໄດ້ເງິນເດືອນ ຂອງເດືອນ ມິຖຸນາ 2020 ໃຫ້ແຈ້ງ ແລະຊຳລະອາກອນ ບໍ່ໃຫ້ກາຍວັນທີ 20 ກໍລະກົດ 2020;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າກົມ

ພູທະນູເພັດ ໄຊສົມບັດ